**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 18 /ສພຂ.ຊຍ
ໄຊຍະບູລີ, ວັນທີ 17 ເມສາ 2026

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງ
# ວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງຂໍ້ຕົກລົງ ຂອງປະທານຄະນະກຳມະການປົກຄອງແຂວງ 5 ປີ (2026-2030)

- ອີງຕາມ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ການລາຍງານ ຂອງຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບແຜນການສ້າງ ແລະ ປັບປຸງຂໍ້ຕົກລົງ ຂອງປະທານຄະນະກຳມະການປົກຄອງແຂວງ 5 ປີ (2026-2030).

ຜ່ານການຄົ້ນຄ້ວາ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງເລິກເຊິ່ງ, ຖີ່ຖ້ວນ ຕໍ່ແຜນການສ້າງ ແລະ ປັບປຸງຂໍ້ຕົກລົງ ຂອງປະທານຄະນະກຳມະການປົກຄອງແຂວງ 5 ປີ (2026-2030) ໃນວາລະກອງປະຊຸມ ຄັ້ງປະຖົມມະລືກ ຂອງສະພາປະຊາຊົນແຂວງ ໄຊຍະບູລີ ຊຸດທີ V ຄັ້ງວັນທີ 10 ເມສາ 2026.

## ກອງປະຊຸມ ຕົກລົງ:

### ມາດຕາ 1 ພິຈາລະນາແຜນການສ້າງ ແລະ ປັບປຸງຂໍ້ຕົກລົງ ຂອງປະທານຄະນະກຳມະການປົກຄອງແຂວງ 5 ປີ (2026-2030)

ກອງປະຊຸມເຫັນດີຮັບຮອງເອົາແຜນການສ້າງແຜນ ແລະ ປັບປຸງຂໍ້ຕົກລົງ ຂອງປະທານຄະນະກຳມະການປົກຄອງແຂວງ 5 ປີ (2026-2030) ມີທັງໝົດ 21 ສະບັບ, ໃນນັ້ນ ມີຂໍ້ຕົກລົງສ້າງໃໝ່ 8 ສະບັບ, ຂໍ້ຕົກລົງປັບປຸງ 13 ສະບັບ ລະອຽດດັ່ງນີ້:

1. ຂໍ້ຕົກລົງ ຂົງເຂດເສດຖະກິດ ມີ 11 ສະບັບ ໃນນີ້ ຂໍ້ຕົກລົງສ້າງໃໝ່ ມີ 5 ສະບັບ ແລະ ປັບປຸງ ມີ 6 ສະບັບ;
2. ຂໍ້ຕົກລົງ ຂົງເຂດວັດທະນະທຳ-ສັງຄົມ ມີ 9 ສະບັບ ໃນນີ້ ຂໍ້ຕົກລົງສ້າງໃໝ່ ມີ 3 ສະບັບ ແລະ ປັບປຸງ ມີ 6 ສະບັບ;
3. ຂໍ້ຕົກລົງ ຂົງເຂດປ້ອງກັນຄວາມສະຫງົບ ມີ 1 ສະບັບ ຂໍ້ຕົກລົງປັບປຸງ ມີ 1 ສະບັບ.

### ມາດຕາ 2 ແຜນຄາດຄະເນການສ້າງ ແລະ ປັບປຸງຂໍ້ຕົກລົງ ປະຈຳແຕ່ລະປີ

ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ກຳນົດແຜນການສ້າງ ແລະ ປັບປຸງຂໍ້ຕົກລົງ ປະຈຳ 6 ເດືອນ ແລະ ປີ ບົນພື້ນຖານຄວາມກຽມພ້ອມ ແລະ ການສະເໜີຂອງຄະນະກຳມະການອົງການປົກຄອງແຂວງ ແນໃສ່ເຮັດໃຫ້ການນຳເອົາຮ່າງຂໍ້ຕົກລົງເຂົ້າພິຈາລະນາ, ຮັບຮອງ ໃນກອງປະຊຸມຂອງສະພາປະຊາຊົນແຂວງ ຊຸດທີ V ໃຫ້ບັນລຸຕາມແຜນການທີ່ວາງໄວ້.



สแกนด้วย CamScanner

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ຄະນະກຳມະການປົກຄອງແຂວງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ, ຄະນະກຳມະການ ທີ່ກ່ຽວຂ້ອງຂອງສະພາປະຊາຊົນແຂວງ ຕິດຕາມ ແລະ ຊຸກຍູ້ບັນດາພະແນກການ, ອົງການ ທີ່ຮັບຜິດຊອບຮ່າງຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ດຳເນີນການຄົ້ນຄວ້າສ້າງ ແລະ ປັບປຸງ ໃຫ້ສຳເລັດຕາມກຳນົດເວລາ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ



สแกนด้วย CamScanner